ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 394 /ຈທວ.ກທຄວ.ອຄ

ນະຄອນຫຼວງວຽງຈັນ, ວັນທີ 03 ຕຸລາ 2019

ເຖິງ: ບັນດາຫົວໜ່ວຍວິສາຫະກິດ ທີ່ກ່ຽວຂ້ອງ

ເລື່ອງ: ໃຫ້ວິສາຫະກິດທີ່ຂຶ້ນທະບຽນວິສາຫະກິດນຳເຈົ້າໜ້າທີ່ທະບຽນວິສາຫະກິດກົມ ທຄວ ໃນເດືອນ ມັງກອນ ປີ 2019 ເຂົ້າມາພົບ ແລະ ອະທິບາຍເຫດຜົນ ຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ ລົງວັນທີ 26 ທັນວາ 2013;
- ອີງຕາມ ແຈ້ງການ ສະບັບເລກທີ 2121/ອຄ.ທຄວ, ລົງວັນທີ 14 ຕຸລາ 2015, ເລື່ອງ ການກວດກາຕິດຕາມການມີຕົວຕົນຂອງວິສາຫະກິດພາຍຫຼັງທີ່ໄດ້ຂຶ້ນທະບຽນວິສາຫະກິດ;
- ອີງຕາມ ບົດແນະນຳ ສະບັບເລກທີ 1170/ກທຄວ.ອຄ, ລົງວັນທີ 05 ກັນຍາ 2019, ເລື່ອງ: ມາດຕະການຕໍ່ການລະເມີດຂອງວິສາຫະກິດ ພາຍຫຼັງຂຶ້ນທະບຽນວິສາຫະກິດ.

ບົນພື້ນຖານ ຂໍ້ 1 ຂອງບົດແນະນຳ ສະບັບເລກທີ 1170/ກທຄວ.ອຄ, ເຈົ້າໜ້າທີ່ທະບຽນວິສາຫະກິດ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງໃຫ້ວິສາຫະກິດທີ່ຂຶ້ນທະບຽນວິສາຫະກິດນຳເຈົ້າໜ້າທີ່ທະບຽນວິສາຫະກິດກົມ ທຄວ ພາຍໃນເດືອນ ມັງກອນ ປີ 2019 ທີ່ບໍ່ປະຕິບັດນິຕິກຳທີ່ກ່ຽວຂ້ອງ (ລາຍລະອຽດຕາມ ລາຍຊື່ວິສາຫະກິດທີ່ບໍ່ປະຕິບັດ ຄັດຕິດມາພ້ອມນີ້) ໃຫ້ເຂົ້າມາພົບ ແລະ ອະທິບາຍເຫດຜົນ ຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດກົມ ທຄວ ບໍ່ໃຫ້ເກີນວັນທີ 30 ພະຈິກ 2019.

ຖ້າວິສາຫະກິດໃດ ຫາກບໍ່ເຂົ້າມາພົບ ຫລື ມາພົບແຕ່ຄຳຕອບ ບໍ່ມີເຫດຜົນພຽງພໍ ຈະຖືກປະຕິບັດມາດຕະການຕາມແຕ່ລະກໍລະນີ ທີ່ໄດ້ບົ່ງໄວ້ໃນຂໍ້ 2 ຂອງບົດແນະນຳ ສະບັບເລກທີ 1170/ກທຄວ.ອຄ, ລົງວັນທີ 05 ກັນຍາ 2019.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ເຈົ້າໜ້າທີ່ທະບຽນວິສາຫະກິດ

ສຸລິຄຳ ແຈ້ງສະຫວ່າງ

Scanned by CamScanner

## ລາຍຊື່ວິສາຫະກິດທີ່ບໍ່ປະຕິບັດນິຕິກຳທີ່ກ່ຽວຂ້ອງ

| ລຳດັບ | ຊື່ວິສາຫະກິດ | ເລກທີ | ລົງວັນທີ | ເລກລະຫັດວິສາຫະກິດ | ເລກປະຈຳຕົວຜູ້ເສຍອາກອນ | ທີ່ຕັ້ງສຳນັກງານ | ຊື່ຜູ້ອຳນວຍການ ຫຼື ຜູ້ຈັດການ ຫຼື ເຈົ້າຂອງວິສາຫະກິດ | ບັນຫາທີ່ລະເມີດ |
|---|---|---|---|---|---|---|---|---|
| 1 | ບໍລິສັດ ທິບພາພອນ ໄຊຍະວົງ ການຄ້າ ຂາອອກ-ຂາເຂົ້າ ຈຳກັດ | 0006 | 3-1-2019 | 21893 | 083217166-0-00 | ບ້ານ ທົ່ງຕູມ, ເມືອງ ຈັນທະບູລີ, ນວ | ນາງ ທິບພາພອນ ໄຊຍະວົງ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ |
| 2 | ບໍລິສັດ ເກັດທາວ (ລາວ) ຈຳກັດຜູ້ດຽວ | 0003 | 3/1/2019 | 21894 | 265446837-0-00 | ບ້ານ ທາດຂາວ, ເມືອງ ສີສັດຕະນາກ, ນວ | ທ່ານ YU HOI, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ, |
| 3 | ບໍລິສັດ ຢາວພັດທະນາ ຈຳກັດ | 0005 | 3/1/2019 | 21895 | 431380028-0-00 | ບ້ານ ໜອງໄຮ, ເມືອງ ຫາດຊາຍຟອງ, ນວ | ທ່ານ ແສງດາວອນ ຫລວງອາໄພ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 4 | ບໍລິສັດ ບີພີອີ ສຳພັນມິດ ຂົວທາງ-ເຄຫາສະຖານ ແລະ ໄຟຟ້າ ຈຳກັດ | 0008 | 4/1/2019 | 21896 | 853508522-0-00 | ບ້ານ ໃໝ່, ເມືອງ ສີໂຄດຕະບອງ, ນວ | ທ່ານ ວັນໄພ ອິນແປງ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 5 | ບໍລິສັດ ລຽງສີ ມາຊິນເນລີ (ລາວ) ຈຳກັດຜູ້ດຽວ | 0009 | 7/1/2019 | 21897 | 626280885-0-00 | ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນວ | ທ່ານ SHI LIANG, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 6 | ບໍລິສັດ ແອວແອວ ຄອນກິດ ຈຳກັດຜູ້ດຽວ | 0010 | 8/1/2019 | 21898 | 056071164-0-00 | ບ້ານ ຮ່ອງແກ, ເມືອງ ໄຊເສດຖາ, ນວ | ນາງ ລັດປະໄພ ເຖືອງແຈ່ມ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 7 | ບໍລິສັດ ລາວ ຣາຊາຊ້າງ ຈຳກັດຜູ້ດຽວ | 0011 | 8/1/2019 | 21899 | 046733849-0-00 | ບ້ານ ປາກທ້າງ, ເມືອງ ສີໂຄດຕະບອງ, ນວ | ທ່ານ TIAN CHEN, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ, |
| 8 | ບໍລິສັດ ລາວແຟນໄຊ້ 13 ການຄ້າ ຂາເຂົ້າ-ຂາອອກ ຈຳກັດຜູ້ດຽວ | 0015 | 8/1/2019 | 21900 | 435367174-0-00 | ບ້ານ ໜອງໜ່ຽງ, ເມືອງ ໄຊເສດຖາ, ນວ | ທ່ານ CUI ZHENGXUE, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ, |
| 9 | ບໍລິສັດ ຊີເລັນນາ ເທັກໂນໂລຢີລາວ ຈຳກັດຜູ້ດຽວ | 0016 | 8/1/2019 | 21901 | 385141621-0-00 | ບ້ານ ໂພນທັນໃຕ້, ເມືອງ ໄຊເສດຖາ, ນວ | ທ່ານ RAVINDARNATH LETCHUMANAN, ສັນຊາດ ມາເລເຊຍ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ, |
| 10 | ບໍລິສັດ ຂຸດຄົ້ນແຮ່ທາດ ບີ ແກ້ວມີ ຈຳກັດຜູ້ດຽວ | 0563 | 11/4/2019 | 21902 | 436320864-0-00 | ບ້ານ ຫ້ວຍສາຍພາຍ, ເມືອງ ທ່າພະບາດ, ແຂວງ ບໍລິຄຳໄຊ | ທ່ານ ບີ ແກ້ວມີ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດຢັ້ງຢືນຮອງ |
| 11 | ບໍລິສັດ ຣາວອີຕ່າ ການຄ້າ ຈຳກັດ | 0021 | 9/1/2019 | 21903 | 072056546-0-00 | ບ້ານ ໜອງບອນ, ເມືອງ ໄຊເສດຖາ, ນວ | ທ່ານ ແກ້ວດວງສີ ວົງທອງຈິດ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 12 | ບໍລິສັດ ນະພາ ໂກໂບຣ ເຊີວິດ ຈຳກັດຜູ້ດຽວ | 0022 | 9/1/2019 | 21904 | 854776124-0-00 | ບ້ານ ທົ່ງຂື້ວ, ເມືອງ ໄຊເສດຖາ, ນວ | ນາງ ຈັນນະພາ ວົງສະໝັດລະພູມ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດຢັ້ງຢືນຮອງ |
| 13 | ບໍລິສັດ ລາວເຟິງເສິ່ນ ການຄ້າ ຂາເຂົ້າ-ຂາອອກ ຈຳກັດຜູ້ດຽວ | 0028 | 11/1/2019 | 21905 | 328201761-0-00 | ບ້ານ ໄຊມຸງຄຸນ, ເມືອງ ນາຊາຍທອງ, ນວ | ທ່ານ CHEN YONG, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 14 | ບໍລິສັດ ເອັນ ແອລ ເອັນ ສຳຫຼວດ, ເກັບກູ້ ແລະ ທຳລາຍລະເບີດ ຈຳກັດ | 0029 | 11/1/2019 | 21906 | 377301486-0-00 | ບ້ານ ໜອງບອນ, ເມືອງ ໄຊເສດຖາ, ນວ | ທ່ານ ນາລິນນີ ສີພັນດອນ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 15 | ບໍລິສັດ ພູມີເຣຍ ລຽວເອສເຕັດ ອິນເວສເມັ້ນ ຈຳກັດຜູ້ດຽວ | 0031 | 14/1/2019 | 21907 | 574513766-0-00 | ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ, ນວ | ທ່ານ ລຳ ໂຮນ ເຊັງ (Mr. Lum Hon Seng), ສັນຊາດ ສິງກະໂປ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 16 | ບໍລິສັດ ໂຢເຈີ້ນ ບໍລິການຄົບວົງຈອນ ຈຳກັດ | 0035 | 14/1/2019 | 21908 | 346647056-0-00 | ບ້ານ ດົງໝຽງ, ເມືອງ ຈັນທະບູລີ, ນວ | ທ່ານ ຊາວ ໂຢເຈີ້ນ, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 17 | ບໍລິສັດ ເຊີງຊານຊິງ ການຄ້າ ແລະສົ່ງເສີມການປູກຝັງ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ | 0034 | 14/1/2019 | 21909 | 013703333-0-00 | ບ້ານ ດອນຕິ້ວ, ເມືອງ ໄຊທານີ, ນວ | ທ່ານ CHEN CHANGXING, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 18 | ບໍລິສັດ ດີ.ດັບເບີ້ນຢູ.ເອັມ (ລາວ) ຈຳກັດຜູ້ດຽວ | 0042 | 16/1/2019 | 21910 | 265054587-0-00 | ບ້ານ ສາຍລົມ, ເມືອງ ຈັນທະບູລີ, ນວ | ທ່ານ DECHA PONGPALAD, ສັນຊາດ ໄທ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 19 | ບໍລິສັດ ກະສິກຳການຄ້າລາວ-ຈີນ ຈຳກັດຜູ້ດຽວ | 0041 | 15/1/2019 | 21911 | 220208715-0-00 | ບ້ານ ວັງໄຮ, ເມືອງ ໄຊ, ແຂວງ ອຸດົມໄຊ | ທ່ານ LIU QIUMEI, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 20 | ບໍລິສັດ ກົດໝາຍ ວໍຊັນ (ລາວ) ຈຳກັດ | 0045 | 16/1/2019 | 21912 | 446777745-0-00 | ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນວ | ທ່ານ ອະນຸຊາ ສິງທາວົງ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 21 | ບໍລິສັດ ຊານຕົງທົງໄທ ຂາເຂົ້າ-ຂາອອກ ຕິດຕັ້ງອຸປະກອນເຄື່ອງຈັກໄຟຟ້າຈຳກັດຜູ້ດຽວ | 0049 | 17/1/2019 | 21913 | 084357828-0-00 | ບ້ານ ດົງນາໂຊກໃຕ້, ເມືອງ ສີໂຄດຕະບອງ, ນວ | ທ່ານ ZHAO WENGANG, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |

Scanned by CamScanner

| | | | | | | | | |
|---|---|---|---|---|---|---|---|---|
| 22 | ບໍລິສັດ ໃບບັດ ລາວ ຈໍາກັດຜູ້ດຽວ | 0047 | 17/1/2019 | 21914 | 015011449-0-00 | ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນວ | ທ່ານ WONG CHI PAN, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນໍາທຶນເຂົ້າມາສໍາລັບຜູ້ລົງທຶນຕ່າງປະເທດ |
| 23 | ບໍລິສັດ ໃບຊິນເມົາອີ ຈໍາກັດຜູ້ດຽວ | 0052 | 17/1/2019 | 21915 | 351545467-0-00 | ບ້ານ ນາຄໍາ, ເມືອງ ສີໂຄດຕະບອງ, ນວ | ທ່ານ CAO XIAOLI, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນໍາທຶນເຂົ້າມາສໍາລັບຜູ້ລົງທຶນຕ່າງປະເທດ |
| 24 | ບໍລິສັດ ຄໍາມີໄຊຈະເລີນຊັບ ຈໍາກັດຜູ້ດຽວ | 0053 | 18/1/2019 | 21916 | 163151418-0-00 | ບ້ານ ດົງປ່າແຫຼບ, ເມືອງ ຈັນທະບູລີ, ນວ | ທ່ານ ຢາດອາລຸນ ລໍວັນໄຊ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |
| 25 | ໂຮງງານອຸສາຫະກໍາ ພາວົງໄຊ ຜະລິດແກ້ວ ແລະ ປຸງແຕ່ງ ສໍາເລັດຮູບ ຈໍາກັດ | 0055 | 18/1/2019 | 21917 | 624546776-0-00 | ບ້ານ ທົ່ງປົ່ງ, ເມືອງ ສີໂຄດຕະບອງ, ນວ | ທ່ານ ຄໍາພົດ ພາວົງໄຊ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ |
| 26 | ບໍລິສັດ ເດີວິນເບີສະຕາ ລາວ ຈໍາກັດ | 0056 | 18/1/2019 | 21918 | 801837873-0-00 | ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນວ | ທ່ານ ເດາະ ບຸພະສີລີ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ |
| 27 | ບໍລິສັດ ແອວທີຊີ ອະສັງຫາລິມະຊັບ ຈໍາກັດ | 0061 | 21/1/2019 | 21919 | 708701219-0-00 | ບ້ານ ທ່າພະລານໄຊ, ເມືອງ ສີສັດຕະນາກ, ນວ | ທ່ານ ພຸດທະສອນ ສິມພາວັນ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ |
| 28 | ໂຮງໝໍການ ແພດພື້ນເມືອງ ລາວ-ຈີນ ບໍ່ແກ້ວ ຈໍາກັດຜູ້ດຽວ | 0063 | 21/1/2019 | 21920 | 431524228-0-00 | ບ້ານ ປ່າອ້ອຍ, ເມືອງ ຫ້ວຍຊາຍ, ນວ | ທ່ານ ລີ ຊວງຊີ, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນໍາທຶນເຂົ້າມາສໍາລັບຜູ້ລົງທຶນຕ່າງປະເທດ |
| 29 | ບໍລິສັດ ກອນສິນ ພັດທະນາອະສັງຫາລິມະຊັບ ຈໍາກັດ | 0067 | 23/1/2019 | 21921 | 486505453-0-00 | ບ້ານ ເກົ້າຍອດ, ເມືອງ ສີສັດຕະນາ, ນວ | ທ່ານ ອາຊື່ ກອນສິນ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນໍາທຶນເຂົ້າມາສໍາລັບຜູ້ລົງທຶນຕ່າງປະເທດ |
| 30 | ບໍລິສັດ ລຽງເຟິງ ອຸດສາຫະກໍາ ແລະ ການຄ້າ | 0074 | 24/1/2019 | 21922 | 421238161-0-00 | ບ້ານ ປາກທ້າງ, ເມືອງ ສີໂຄດຕະບອງ, ນວ | ທ່ານ HE WENBIN, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນໍາທຶນເຂົ້າມາສໍາລັບຜູ້ລົງທຶນຕ່າງປະເທດ |
| 31 | ບໍລິສັດ ອັນຊວນ ນິວ ເອັນເນີເຈີ ຈໍາກັດ | 0069 | 24/1/2019 | 21923 | 331671468-0-00 | ບ້ານ ໜອງດ້ວງໃຕ້, ເມືອງ ສີໂຄດຕະບອງ, ນວ | ທ່ານ KAI ZHAO, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນໍາທຶນເຂົ້າມາສໍາລັບຜູ້ລົງທຶນຕ່າງປະເທດ |
| 32 | ບໍລິສັດ ຈັນທະລັງສີ ອະສັງຫາລິມະຊັບ ຈໍາກັດຜູ້ດຽວ | 0070 | 24/1/2019 | 21924 | 628680415-0-00 | ບ້ານ ສະພັງເມີກ, ເມືອງ ໄຊທານີ, ນວ | ທ່ານ ສຸກຖາວອນ ຈັນທະລັງສີ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |
| 33 | ບໍລິສັດ ຊ່ວງຊານອະສັງຫາລິມະຊັບ ຈໍາກັດຜູ້ດຽວ | 0071 | 24/1/2019 | 21925 | 810435246-0-00 | ບ້ານ ຫ້ວຍຫົງ, ເມືອງ ຈັນທະບູລີ, ນວ | ທ່ານ ສີສັນ ຫຼວງສີລິຄາມ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |
| 34 | ບໍລິສັດ ພີແອລ ໂຊກໄຊ ສໍາຫຼວດ ແລະ ຂຸດຄົ້ນບໍ່ແຮ່ ຈໍາກັດຜູ້ດຽວ | 0073 | 24/1/2019 | 21926 | 211606528-0-00 | ບ້ານ ທົ່ງສາງນາງ, ເມືອງ ຈັນທະບູລີ, ນວ | ທ່ານ ອິນແປງ ພັນທະວິໄລ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |
| 35 | ບໍລິສັດ ມິດດາວົງ ອະສັງຫາລິມະຊັບ ແລະ ການຄ້າ ຈໍາກັດຜູ້ດຽວ | 0075 | 24/1/2019 | 21927 | 746241411-0-00 | ບ້ານ ໄຮ່ຄໍາ, ເມືອງ ໄຊເສດຖາ, ນວ | ທ່ານ ບົວພັນ ມິດດາວົງ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |
| 36 | ໂຮງງານຈອດເຫຼັກ, ຕັດແກ້ວ ຫງຽນ ວັນອ່ານ ຈໍາກັດຜູ້ດຽວ | 0079 | 24/1/2019 | 21928 | 477261833-0-00 | ບ້ານ ສີເມືອງ, ເມືອງ ໄຊຍະບູລີ, ແຂວງ ໄຊຍະບູລີ | ທ່ານ NGUYEN VAN AN, ສັນຊາດ ຫວຽດນາມ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນໍາທຶນເຂົ້າມາສໍາລັບຜູ້ລົງທຶນຕ່າງປະເທດ |
| 37 | ບໍລິສັດ ໄຊໂຍບໍລິການພິວພັນເອກະສານຮຽນຕໍ່ຕ່າງປະເທດ ຈໍາກັດຜູ້ດຽວ | 0087 | 25/1/2019 | 21930 | 535524139-0-00 | ບ້ານ ຄໍາຮຸ່ງ, ເມືອງ ໄຊທານີ, ນວ | ທ່ານ ໄຊໂຍ ໃຊພອນໄຊ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |
| 38 | ບໍລິສັດ ຊິນດີ ການຄ້າ (ລາວ) ຈໍາກັດຜູ້ດຽວ | 0089 | 25/1/2019 | 21931 | 887654867-0-00 | ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບູລີ, ນວ | ທ່ານ DONG JINKUI, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນໍາທຶນເຂົ້າມາສໍາລັບຜູ້ລົງທຶນຕ່າງປະເທດ |
| 39 | ບໍລິສັດ ເຊກອງ ບໍ່ແຮ່ ຈໍາກັດ(ຮູບແບບທີ່ແທ້ຈິງແມ່ນບໍລິສັດຈໍາກັດຜູ້ດຽວ) | 0090 | 25/1/2019 | 21932 | 733268378-0-00 | ບ້ານ ດອນນົກຂຸ້ມ, ເມືອງ ສີສັດຕະນາກ, ນວ | ທ່ານ LI KAI, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |
| 40 | ບໍລິສັດ ບຸນຈັນ ອະສັງຫາລິມະຊັບ ຈໍາກັດຜູ້ດຽວ | 0091 | 25/1/2019 | 21933 | 821501865-0-00 | ບ້ານ ຊຽງຍືນ, ເມືອງ ຈັນທະບູລີ, ນວ | ທ່ານ ບຸນຈັນ ໄຊເກີຢາຈົງຕົວ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |
| 41 | ບໍລິສັດ ຈີ ພາວເວີ ພັດທະນາອະສັງຫາລິມະຊັບ ແລະ ການລົງທຶນ ຈໍາກັດ | 0093 | 28/1/2019 | 21934 | 672660771-0-00 | ບ້ານ ທົ່ງສາງນາງ, ເມືອງ ຈັນທະບູລີ, ນວ | ທ່ານ ຄໍາຟອງ ອິນປະລິງ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນໍາທຶນເຂົ້າມາສໍາລັບຜູ້ລົງທຶນຕ່າງປະເທດ |
| 42 | ບໍລິສັດ ປຸ່ສະບາຍ ແລນ ແອນ ເຮົ້າ ຈໍາກັດຜູ້ດຽວ | 0096 | 29/1/2019 | 21935 | 068052233-0-00 | ບ້ານ ໂພນຕ້ອງຈອມມະນີ, ເມືອງ ຈັນທະບູລີ, ນວ | ນາງ ສົມພະສະຫວ່າງ ພອນສະຫວັນ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |
| 43 | ບໍລິສັດ ຈະເລີນນະຄອນ ພັດທະນາ ຈໍາກັດຜູ້ດຽວ | 0095 | 21/1/2019 | 21936 | 473405522-0-00 | ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນວ | ທ່ານ ທັດສະນາຈອນ ບຸນທັນ, ສັນຊາດ ລາວ | ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |
| 44 | ບໍລິສັດ ກຣີນພາວເວີໄປຣ ຈໍາກັດ | 0097 | 28/1/2019 | 21937 | 023002014-0-00 | ບ້ານ ສະຫວ່າງ, ເມືອງ ຈັນທະບູລີ, ນວ | ທ່ານ ວົງໄຕ້ຟ້າ ສີລຸວົງ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |
| 45 | ບໍລິສັດ ລິນດາ ອະສັງຫາລິມະຊັບ ຈໍາກັດຜູ້ດຽວ | 0100 | 28/1/2019 | 21938 | 604562675-0-00 | ບ້ານ ຮ່ອງໄກ່ແກ້ວ, ເມືອງ ຈັນທະບູລີ, ນວ | ນາງ ມີລິນດາ ແຫວນວັນຄໍາ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |

Scanned by CamScanner

| | | | | | | | | |
|---|---|---|---|---|---|---|---|---|
| 46 | ໂຮງງານນ້ຳດື່ມບໍລິສຸດ ການົກຍຸງທອງ ຈຳກັດຜູ້ດຽວ | 0101 | 28/1/2019 | 21939 | 287668137-0-00 | ບ້ານ ໄຊ່, ເມືອງ ປາກງື່ມ, ນວ | ທ່ານ ສາທິດ ພູນຫຼວງລາດ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |
| 47 | ໂຮງງານນ້ຳດື່ມບໍລິສຸດ ແສງປະເສີດ ກາຂົວສີທອງ ຈຳກັດຜູ້ດຽວ | 0102 | 28/1/2019 | 21940 | 083608229-0-00 | ບ້ານ ສີມສະຫວາດ, ເມືອງ ປາກງື່ມ, ນວ | ທ່ານ ຈັນເພັງ ແສງປະເສີດ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |
| 48 | ບໍລິສັດ ແລນມາກ ຈຳກັດຜູ້ດຽວ | 0103 | 28/1/2019 | 21941 | 232538285-0-00 | ບ້ານ ທາດຂາວ, ເມືອງ ສີສັດຕະນາດ, ນວ | ທ່ານ ບຸລະພາ ສັນຕິຄົງຄາ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |
| 49 | ບໍລິສັດ ຢັນອີ ລົງທຶນ ພັດທະນາ ຈຳກັດ | 0105 | 28/1/2019 | 21942 | 817183849-0-00 | ບ້ານ ຮ່ອງແກ, ເມືອງ ໄຊເສດຖາ, ນວ | ທ່ານ ZHAO YUN, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 50 | ບໍລິສັດ ຫຼວງພະບາງພາວເວີ ຈຳກັດ | 0107 | 29/1/2019 | 21943 | 407461862-0-00 | ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນວ | ທ່ານ DAVID VANDAU, ສັນຊາດ ອາເມຣິກາ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 51 | ບໍລິສັດ ຮ່ວມທຶນລາວ-ຈີນ ການຄ້າ ຂາເຂົ້າ-ຂາອອກ ວັດສະດຸ ຈຳກັດ | 0110 | 29/1/2019 | 21944 | 512286623-0-00 | ບ້ານ ສະພັງເມິກ, ເມືອງ ໄຊທານີ, ນວ | ທ່ານ ພູຄຳ ວົງວິຈິດ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 52 | ບໍລິສັດ ແມ່ຂອງ ປົງເຈີ່ນ ຂາເຂົ້າ-ຂາອອກ ຈຳກັດຜູ້ດຽວ | 0114 | 31/1/2019 | 21945 | 781885349-0-00 | ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນວ | ທ່ານ HU LUNMING, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 53 | ບໍລິສັດ ຮ່ວມທຶນໄອດີໂກລາວ ຈຳກັດ | 0115 | 31/1/2019 | 21946 | 482817576-0-00 | ບ້ານ ເທີນ, ເມືອງ ແປກ, ຂ ຊຽງຂວາງ | ທ່ານ HO NGOC HOAI, ສັນຊາດ ຫວຽດນາມ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 54 | ບໍລິສັດ ອານອີ ບໍລິການລົງທຶນອະສັງຫາລິມະຊັບ ຈຳກັດ | 0116 | 31/1/2019 | 21947 | 468424327-0-00 | ບ້ານ ຊຳເກດ, ເມືອງ ສີໂຄດຕະບອງ, ນວ | ທ່ານ LIU QINGSONG, ສັນຊາດ ຈີນ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 55 | ບໍລິສັດ ທີແອລຊີ ພັດທະນາອະສັງຫາລິມະຊັບ ຈຳກັດ | 1047 | 4/7/2019 | 21948 | 030330019-0-00 | ບ້ານ ທົ່ງພານທອງ, ເມືອງ ສີສັດຕະນາກ, ນວ | ທ່ານ ບຸນທ່ຽງ ນອນຍະລາດ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ |
| 56 | ບໍລິສັດ ເອເຊຍ ວິສະວະກິດກຳ ພະລັງງານ ຈຳກັກຜູ້ດຽວ | 0119 | 31/1/2019 | 21949 | 751113185-0-00 | ບ້ານ ທ້ອຍທົ່ງ, ເມືອງ ຈັນທະບູລີ, ນວ | ທ່ານ ຄອນສະຫວັນ ອຸປະຣາຊ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |
| 57 | ບໍລິສັດ ລາວສາກົນ ບໍລິການຂົນສົ່ງຜ່ານແດນ ຈຳກັດ | 0112 | 31/1/2019 | 21950 | 762754515-0-00 | ບ້ານ ອຸບມຸງ, ເມືອງ ສີໂຄດຕະບອງ, ນວ | ທ່ານ ບຸນຍະເວດ ນອນແສງດີ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |
| 58 | ບໍລິສັດ ເອເລເມັນ ເພເມັນ ໂຊລຸຊັນ ລາວ ຈຳກັດ | 0123 | 31/1/2019 | 21951 | 613762478-0-00 | ບ້ານ ໜອງດ້ວງເໜືອ, ເມືອງ ສີໂຄດຕະບອງ, ນວ | ທ່ານ ALEXEY VEGMAN, ສັນຊາດ ມາເລເຊຍ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 59 | ບໍລິສັດ ສະຫວ່າງປາຊິຟິກລາວ ພັດທະນາອະສັງຫາລິມະຊັບ ຈຳກັດ | 0124 | 31/1/2019 | 21952 | 750047412-0-00 | ບ້ານ ໜອງສະໂນຄຳ, ເມືອງ ສີໂຄດຕະບອງ, ນວ | ທ່ານ SAWANG JANA, ສັນຊາດ, ໄທ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 60 | ໂຮງໝໍ ນິວລາຍ ປາກເຊ ຈຳກັດຜູ້ດຽວ | 0126 | 31/1/2019 | 21953 | 330221461-0-00 | ບ້ານ ໂພນສະອາດ, ເມືອງ ປາກເຊ, ແຂວງ ຈຳປາສັກ | ທ່ານ NGUYEN CONG PHUC, ສັນຊາດ ຫວຽດນາມ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 61 | ບໍລິສັດ ເຄລ ລາວ ຄອນສະຕັກເຊິນ ຈຳກັດ | 0129 | 31/1/2019 | 21954 | 554278718-0-00 | ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນວ | ທ່ານ INGON KIM, ສັນຊາດ ເກົາຫຼີໃຕ້ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ນຳທຶນເຂົ້າມາສຳລັບຜູ້ລົງທຶນຕ່າງປະເທດ |
| 62 | ບໍລິສັດ ອະຣິນດາ ອະສັງຫາລິມະຊັບ ຈຳກັດຜູ້ດຽວ | 0139 | 31/1/2019 | 21955 | 352777556-0-00 | ບ້ານ ສີສະຫວາດ, ເມືອງ ຈັນທະບູລີ, ນວ | ທ່ານ ຂັນໄຊ ວັນທະວົງ, ສັນຊາດ ລາວ | ບໍ່ລາຍງານໃນໄລຍະ 90 ວັນ, ບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ |

Scanned by CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເລກທີ 1170 /ກທຄວ.ອຄ

ນະຄອນຫຼວງວຽງຈັນ, ວັນທີ 05 ກັນຍາ 2019

ເຖິງ : - ເຈົ້າໜ້າທີ່ທະບຽນວິສາຫະກິດ, ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ

- ເຈົ້າໜ້າທີ່ທະບຽນວິສາຫະກິດ, ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ

- ບັນດາຫົວໜ່ວຍວິສາຫະກິດ ໃນຂອບເຂດທົ່ວປະເທດ

ເລື່ອງ: ບົດແນະນຳ ກ່ຽວກັບມາດຕະການຕໍ່ການລະເມີດຂອງວິສາຫະກິດ ພາຍຫຼັງຂຶ້ນທະບຽນວິສາຫະກິດ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ ລົງວັນທີ 26 ທັນວາ 2013;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຂຶ້ນທະບຽນວິສາຫະກິດ ສະບັບເລກທີ 0023/ອຄ.ກຄທວ, ລົງວັນທີ 9 ມັງກອນ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ສະບັບເລກທີ 1752/ອຄ, ລົງວັນທີ 19 ກັນຍາ 2016;
- ອີງຕາມ ແຈ້ງການ ສະບັບເລກທີ 1720/ອຄ.ຄພນ, ລົງວັນທີ 09 ກັນຍາ 2011, ເລື່ອງ: ການໂຈະການດຳເນີນທຸລະກິດຊົ່ວຄາວ ຫຼື ຖາວອນ ແລະ ການຖອນທະບຽນວິສາຫະກິດ;
- ອີງຕາມ ແຈ້ງການ ສະບັບເລກທີ 2121/ອຄ.ທຄວ, ລົງວັນທີ 14 ຕຸລາ 2015, ເລື່ອງ ການກວດກາຕິດຕາມການມີຕົວຕົນຂອງວິສາຫະກິດພາຍຫຼັງທີ່ໄດ້ຂຶ້ນທະບຽນວິສາຫະກິດ;
- ອີງຕາມ ແຈ້ງການ ສະບັບເລກທີ 2823/ທອຄ.ກທຄວ, ລົງວັນທີ 26 ພະຈິກ 2018, ເລື່ອງ: ການຄວັດຕາປະທັບວິສາຫະກິດ ແລະ ປ້າຍຊື່ວິສາຫະກິດ.

ເພື່ອເພີ່ມທະວີ ປະສິດທິພາບ ແລະ ປະສິດທິຜົນ ໃນວຽກງານຄຸ້ມຄອງ ຕິດຕາມ ກວດກາ ສະພາບການມີຕົວຕົນ ຂອງວິສາຫະກິດ ພາຍຫລັງຂຶ້ນທະບຽນວິສາຫະກິດ ຕາມຂໍ້ກຳນົດທີ່ໄດ້ບົ່ງໄວ້ໃນນິຕິກຳ ດັ່ງທີ່ກ່າວມາຂ້າງເທິງ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ອອກບົດແນະນຳແຈ້ງມາຍັງເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດມາດຕະການ ດັ່ງນີ້:

1. ກໍລະນີ ຫາກມີການລະເມີດ ລະບຽບການກ່ຽວກັບ ການບໍ່ເຄື່ອນໄຫວທຸລະກິດໃນໄລຍະຜ່ານມາ, ການບໍ່ລາຍງານໃນໄລຍະ 90 ວັນ, ການບໍ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດ ຫລື ໃບອະນຸຍາດລົງທຶນ, ການບໍ່ນຳທຶນເຂົ້າມາ ສຳລັບຜູ້ລົງທຶນຕ່າງປະເທດ, ການບໍ່ສົ່ງໃບຮຸ້ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ, ການບໍ່ສົ່ງສຳເນົາປຶ້ມບັນຊີທະບຽນຜູ້ຖືຮຸ້ນ ຕາມທີ່ບົ່ງໄວ້ໃນນິຕິກຳທີ່ກ່ຽວຂ້ອງ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ



Scanned by CamScanner

ອອກໜັງສືແຈ້ງລົງທາງ ເວັບໄຊ: www.ned.gov.la, Facebook: ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຫຼື ທາງສື່ມວນຊົນອື່ນໆ;

ໜັງສືແຈ້ງດັ່ງທີ່ກ່າວມາເທິງນີ້ ຕ້ອງລະບຸເນື້ອໃນ ຕົ້ນຕໍ ດັ່ງນີ້:

- ຊື່ວິສາຫະກິດ;
- ໃບທະບຽນວິສາຫະກິດ ເລກທີ, ລົງວັນທີ;
- ເລກລະຫັດວິສາຫະກິດ;
- ເລກປະຈຳຕົວຜູ້ເສຍອາກອນ (ຖ້າມີ);
- ທີ່ຕັ້ງສຳນັກງານ;
- ຊື່ຜູ້ອຳນວຍການ, ຜູ້ຈັດການ ຫຼື ຜູ້ເປັນເຈົ້າຂອງວິສາຫະກິດ;
- ບັນຫາທີ່ລະເມີດ;
- ກຳນົດເວລາໃຫ້ປະຕິບັດ ຫລື ປັບປຸງແກ້ໄຂ (ໃຫ້ກຳນົດຕາມຄວາມຈຳເປັນ ແລະ ຄວາມເໝາະສົມຂອງບັນຫາທີ່ລະເມີດ ແຕ່ຕ່ຳສຸດບໍ່ໃຫ້ຫຼຸດ 30 ວັນ ແລະ ສູງສຸດບໍ່ໃຫ້ເກີນ 60 ວັນ);

2. ພາຍຫຼັງສິ້ນສຸດກຳນົດເວລາໃຫ້ປະຕິບັດ ຫລື ປັບປຸງແກ້ໄຂຕາມທີ່ກ່າວມາ ຂໍ້ 1 ເທິງນີ້ແລ້ວ ແຕ່ວິສາຫະກິດ ກໍບໍ່ສາມາດປະຕິບັດ ຫລື ປັບປຸງແກ້ໄຂໄດ້ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ປະຕິບັດມາດຕະການຕາມແຕ່ລະກໍລະນີ ດັ່ງນີ້:

2.1 ການບໍ່ເຄື່ອນໄຫວທຸລະກິດໃນໄລຍະຜ່ານມາ ໂດຍການບໍ່ລາຍງານປະຈຳແຕ່ລະປີ ຕາມແບບພິມ ຈ (2.1 ເຖິງ 2.6) ທີ່ລະບຸໄວ້ໃນ ແຈ້ງການ ສະບັບເລກທີ 2121/ອຄ.ທຄວ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ສັ່ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ເພື່ອໃຫ້ປັບປຸງແກ້ໄຂ ຕ່ຳສຸດບໍ່ໃຫ້ຫຼຸດ 30 ວັນ ແລະ ສູງສຸດບໍ່ໃຫ້ເກີນ 60 ວັນ. ເມື່ອພົ້ນກຳນົດເວລາດັ່ງກ່າວ ຫາກຍັງບໍ່ສາມາດປັບປຸງແກ້ໄຂໄດ້ ໂດຍບໍ່ມີເຫດຜົນອັນສົມຄວນ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ສັ່ງໂຈະການເຄື່ອນໄຫວທຸລະກິດຖາວອນ;

ພາຍຫຼັງເຈົ້າໜ້າທີ່ທະບຽນວິສາຫະກິດ ສັ່ງໂຈະການເຄື່ອນໄຫວທຸລະກິດຖາວອນແລ້ວ ແຕ່ວິສາຫະກິດດັ່ງກ່າວ ຍັງບໍ່ເຂົ້າມາພົວພັນ ຫລື ກວດພົບວ່າບໍ່ມີຕົນຕົວ ຫລື ຢຸດເຊົາການດຳເນີນທຸລະກິດໄປແລ້ວ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ຍ້າຍຊື່ ແລະ ຂໍ້ມູນທັງໝົດຂອງວິສາຫະກິດດັ່ງກ່າວ ອອກຈາກຖານຂໍ້ມູນວິສາຫະກິດ ໄປໄວ້ຢູ່ໃນບັນຊີທຸລະກິດທີ່ບໍ່ມີຕົວຕົນ (Abandoned Enterprise List ຫລື AEL) ແລ້ວໃຫ້ແຈ້ງລາຍຊື່ວິສາຫະກິດໃນບັນຊີທຸລະກິດທີ່ບໍ່ມີຕົວຕົນ ລົງທາງເວັບໄຊ: www.ned.gov.la, Facebook: ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຫຼື ທາງສື່ມວນຊົນອື່ນໆ ເປັນເວລາ 5 ປີ. ຫຼັງຈາກພົ້ນກຳນົດເວລາ 5 ປີ ໃຫ້ລຶບຊື່ວິສາຫະກິດອອກຈາກບັນຊີທະບຽນວິສາຫະກິດ ຕາມວັກສອງ ມາດຕາ 72 ຂອງກົດໝາຍວ່າດ້ວຍວິສາຫະກິດ. ສ່ວນວິທີການຍ້າຍຊື່ ແລະ ຂໍ້ມູນຂອງວິສາຫະກິດອອກຈາກຖານຂໍ້ມູນວິສາຫະກິດ ຈະມີບົດແນະນຳຕ່າງຫາກ.

2.2 ການບໍ່ລາຍງານໃນໄລຍະ 90 ວັນ ຕາມແບບພິມ ຈ(1) ຫລື ການບໍ່ລາຍງານປະຈຳປີ ຕາມແບບພິມ ຈ(2.1 ຫາ 2.6) ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ



Scanned by CamScanner

ຈົນກວ່າຈະປະຕິບັດໃຫ້ຖືກຕ້ອງ ຕາມຂໍ້ 5 ຂອງແຈ້ງການ ສະບັບເລກທີ 2121/ອຄ.ທຄວ ເວັ້ນເສຍແຕ່ມີເຫດຜົນຈຳເປັນ ເຊິ່ງຕ້ອງລະບຸໄວ້ໃນບົດບັນທຶກກັບເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ;

2.3 ການບໍ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດ ຫລື ໃບອະນຸຍາດລົງທຶນ ຂອງວິສາຫະກິດທີ່ບໍ່ມີກິດຈະການລະບຸໄວ້ໃນດ້ານຫຼັງໃບທະບຽນວິສາຫະກິດ ໃຫ້ປະຕິບັດຕາມແຕ່ລະກໍລະນີ ລຸ່ມນີ້:

- ກໍລະນີ ວິສາຫະກິດເຂົ້າມາຊີ້ແຈງເຫດຜົນ ແມ່ນໃຫ້ເຮັດບົດບັນທຶກນຳເຈົ້າໜ້າທີ່ທະບຽນວິສາຫະກິດ ກ່ຽວກັບກຳນົດເວລາການຂໍອະນຸຍາດດຳເນີນທຸລະກິດ ຫລື ໃບອະນຸຍາດລົງທຶນ ໃນຄັ້ງຕໍ່ໄປ;

- ກໍລະນີ ວິສາຫະກິດບໍ່ເຂົ້າມາພົບ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ຍ້າຍຊື່ ແລະ ຂໍ້ມູນທັງໝົດຂອງວິສາຫະກິດດັ່ງກ່າວ ອອກຈາກຖານຂໍ້ມູນວິສາຫະກິດ ໄປໄວ້ຢູ່ໃນບັນຊີທຸລະກິດທີ່ບໍ່ມີຕົວຕົນ ແລ້ວໃຫ້ແຈ້ງລາຍຊື່ວິສາຫະກິດໃນບັນຊີທຸລະກິດທີ່ບໍ່ມີຕົວຕົນ ລົງທາງເວັບໄຊ: www.ned.gov.la, Facebook: ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຫຼື ທາງສື່ມວນຊົນອື່ນໆ ເປັນເວລາ 1 ປີ. ຫຼັງຈາກພົ້ນກຳນົດເວລາ 1 ປີ ໃຫ້ລຶບຊື່ວິສາຫະກິດອອກຈາກບັນຊີທະບຽນວິສາຫະກິດ ຕາມວັກສອງ ມາດຕາ 72 ຂອງກົດໝາຍວ່າດ້ວຍວິສາຫະກິດ;

2.4 ການບໍ່ນຳທຶນເຂົ້າມາ ສຳລັບຜູ້ລົງທຶນຕ່າງປະເທດ ຕາມມາດຕາ 53 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ລວມທັງການຖອກທຶນຈົດທະບຽນຂອງບໍລິສັດຈຳກັດຜູ້ດຽວ ທີ່ຜູ້ຖືຮຸ້ນເປັນຜູ້ລົງທຶນຕ່າງປະເທດ ຕາມມາດຕາ 177 ຂອງກົດໝາຍວ່າດ້ວຍວິສາຫະກິດ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ສັ່ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ເວັ້ນເສຍແຕ່ມີເຫດຜົນຈຳເປັນ ເຊິ່ງຕ້ອງລະບຸໄວ້ໃນບົດບັນທຶກກັບເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ;

2.5 ການບໍ່ສົ່ງໃບຮຸ້ນ ຂອງບໍລິສັດຈຳກັດຜູ້ດຽວ ທີ່ເປັນບໍລິສັດພາຍໃນ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເຊັນຮັບຮອງ ພ້ອມຫຼັກຖານການຖອກທຶນຈົດທະບຽນ ຕາມທີ່ກຳນົດໄວ້ໃນ ວັກໜຶ່ງ ມາດຕາ 177 ຂອງກົດໝາຍວ່າດ້ວຍວິສາຫະກິດ ແມ່ນບໍ່ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ປ່ຽນແປງເນື້ອໃນທະບຽນວິສາຫະກິດດັ່ງກ່າວ ຈົນກວ່າຈະປະຕິບັດໃຫ້ຖືກຕ້ອງ ເວັ້ນເສຍແຕ່ມີເຫດຜົນຈຳເປັນ ເຊິ່ງຕ້ອງລະບຸໄວ້ໃນບົດບັນທຶກກັບເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ;

2.6 ການບໍ່ສົ່ງສຳເນົາປຶ້ມບັນຊີທະບຽນຜູ້ຖືຮຸ້ນ ຕາມທີ່ກຳນົດໄວ້ໃນ ມາດຕາ 112 ຂອງກົດໝາຍວ່າດ້ວຍວິສາຫະກິດ ແມ່ນບໍ່ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ປ່ຽນແປງເນື້ອໃນທະບຽນວິສາຫະກິດດັ່ງກ່າວ ຈົນກວ່າຈະປະຕິບັດໃຫ້ຖືກຕ້ອງ ເວັ້ນເສຍແຕ່ມີເຫດຜົນຈຳເປັນ ເຊິ່ງຕ້ອງລະບຸໄວ້ໃນບົດບັນທຶກກັບເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ;

3. ການບໍ່ຕິດປ້າຍຊື່ວິສາຫະກິດ, ການໃຊ້ຊື່ວິສາຫະກິດບໍ່ຖືກຕ້ອງ ຕາມແຈ້ງການ ສະບັບເລກທີ 2823/ຫອຄ.ກທຄວ ຫລື ການບໍ່ປົດປ້າຍຊື່ວິສາຫະກິດພາຍຫຼັງຖືກ ຍຸບເລີກ ໃຫ້ປະຕິບັດມາດຕະການ ຕາມມາດຕາ 216 ແລະ/ຫລື ມາດຕາ 218 ຂອງກົດໝາຍວ່າດ້ວຍວິສາຫະກິດ;

4. ວິສາຫະກິດທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດ ຫລື ໃບອະນຸຍາດລົງທຶນແລ້ວ ແຕ່ບໍ່ສົ່ງສຳເນົາໃບອະນຸຍາດດັ່ງກ່າວ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ຕາມກຳນົດເວລາທີ່ບົ່ງໄວ້ໃນ ວັກຫ້າ ມາດຕາ 16 ຂອງ



Scanned by CamScanner

ຂໍ້ຕົກລົງ ສະບັບເລກທີ 0023/ອຄ.ກທຄວ ແມ່ນໃຫ້ເຮັດບົດບັນທຶກນຳເຈົ້າໜ້າທີ່ທະບຽນວິສາຫະກິດ ກ່ຽວກັບເວລາໃນການສົ່ງໃບອະນຸຍາດ ແລະ ມາດຕະການຕໍ່ການລະເມີດ ກຳນົດເວລາດັ່ງກ່າວ;

5. ບຸກຄົນ ຫລື ນິຕິບຸກຄົນ ທີ່ນຳເອົາໃບທະບຽນວິສາຫະກິດຂອງວິສາຫະກິດ ທີ່ຖືກປະຕິບັດມາດຕະການ ສັ່ງໂຈະການເຄື່ອນໄຫວທຸລະກິດ ຫລື ລົບລ້າງໃບທະບຽນວິສາຫະກິດ ໄປນຳໃຊ້ ນອກຈາກຈະຖືກປະຕິບັດມາດຕະການ ຕາມມາດຕາ 212 ຂອງກົດໝາຍວ່າດ້ວຍວິສາຫະກິດແລ້ວ ຍັງຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ ຈາກຜົນເສຍຫາຍທີ່ຕົນໄດ້ສ້າງຂຶ້ນ;

6. ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ເປັນເຈົ້າການລວບລວມຂໍ້ມູນວິສາຫະກິດ ທີ່ຖືກປະຕິບັດມາດຕະການຕາມຄຳແນະນຳສະບັບນີ້ ລາຍງານໃຫ້ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຊາບ ປະຈຳງວດ.

ແຈ້ງມາ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມ

ດຣ.ສົມພວງ ພຽນພິມົດ



Scanned by CamScanner